ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 2075 /ອຄ.

ນະຄອນຫລວງວຽງຈັນ, ວັນທີ 19 ຕຸລາ 2010.

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານໂຮງງານຜະລິດດິນຈີ່

- ອີງຕາມກົດໝາຍ ວ່າດ້ວຍອຸດສາຫະກໍາປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ່ 3/4/99.
- ອີງຕາມດໍາລັດຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ເລກທີ 67/ນຍ, ລົງວັນທີ່ 12/4/06.
- ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ່ 17/8/06.

### ລັດຖະມົນຕີວ່າການກະຊວງ ອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:

### ໝວດທີ I
### ຫລັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກໍານົດມາດຕະຖານໂຮງງານຜະລິດດິນຈີ່ ໂດຍສະເພາະ ດ້ານສະຖານທີ່ຕັ້ງ, ອາຄານ, ເຄື່ອງຈັກ, ລະບົບການຜະລິດ, ເຕັກນິກວິຊາການ, ຄວາມປອດໄພ, ສຸຂະອະນາໄມ ແລະ ສິ່ງແວດລ້ອມໂຮງງານ; ແນໃສ່ເພື່ອດັດສົມ ຄຸ້ມຄອງໂຮງງານໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ເຮັດໃຫ້ການເຄື່ອນໄຫວກິດຈະການໂຮງງານມີຄວາມເປັນລະບຽບຮຽບຮ້ອຍ ແລະ ທັງເປັນການຊຸກຍູ້ສົ່ງເສີມຜະລິດຕະພັນຂອງໂຮງງານ ໃຫ້ມີມາດຕະຖານ ແລະ ມີຄຸນນະພາບດີ.

**ມາດຕາ 2. ຄວາມໝາຍຂອງໂຮງງານຜະລິດດິນຈີ່**

ໂຮງງານຜະລິດດິນຈີ່ ແມ່ນປະເພດໂຮງງານທີ່ໄດ້ກໍານົດໄວ້ໃນຂໍ້ 10 ມາດຕາ 9 ຂອງກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໝາຍເຖິງ ໂຮງງານທີ່ນໍາໃຊ້ວັດຖຸດິບດິນໜຽວ (Clay) ເປັນຕົ້ນຕໍ, ໂດຍຜ່ານຂະບວນການປຸງແຕ່ງປ່ຽນຈາກສະພາບເດີມ ມາເປັນຜະລິດຕະພັນສໍາເລັດຮູບ ດ້ວຍການນໍາໃຊ້ເຄື່ອງຈັກ ແລະ ແຮງງານຄົນຢູ່ພາຍໃນໂຮງງານ, ຊຶ່ງຜະລິດຕະພັນເຫຼົ່ານັ້ນສາມາດເອົາໄປຈໍາໜ່າຍເປັນສິນຄ້າໄດ້. ໂຮງງານດັ່ງກ່າວໄດ້ຈັດເຂົ້າໃນເລກລະຫັດ 2392, 2393 ຂອງການຈັດປະເພດອຸດສາຫະກໍາສາກົນ (ISIC, International Standard for Industrial Classification).

ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ເພື່ອການຕິດຕາມ, ຄຸ້ມຄອງ ແລະ ສົ່ງເສີມ ການເຄື່ອນໄຫວກິດຈະການໂຮງງານຜະລິດດິນຈີ່ທຸກລະດັບ ແລະ ທຸກປະເພດ ຕາມມາດຕາ 10 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໃນຂອບເຂດທົ່ວປະເທດ.

ມາດຕາ 4. ປະເພດໂຮງງານຜະລິດດິນຈີ່

ໂຮງງານຜະລິດດິນຈີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ແມ່ນປະເພດໂຮງງານຜະລິດດິນຈີ່ ແບບອຸດສາຫະກຳ ແລະ ແບບຄອບຄົວ ໂດຍນຳໃຊ້ແຮງງານຄົນ, ເຄື່ອງຈັກ, ເຕັກໂນໂລຊີ ເຂົ້າໃນຂະບວນການຜະລິດ ເຊັ່ນ: ຂັ້ນຕອນການຂຸດດິນ, ບົດດິນ, ຮ່ອນດິນ, ລຳລຽງດິນ, ປະສົມດິນ, ອັດດິນ, ຕັດດິນ, ເຜົາດິນ ແລະ ອື່ນໆ ຊຶ່ງແບ່ງອອກເປັນສອງມາດຕະຖານຄື:

1. ໂຮງງານຜະລິດດິນຈີ່ ມາດຕະຖານທີ່ໜຶ່ງ ໝາຍເຖິງ ໂຮງງານຜະລິດດິນຈີ່ ແບບອຸດສາຫະກຳ ຕາມເລກລະຫັດ 2392, 2393 ດ້ວຍຂະບວນການປຸງແຕ່ງ ໂດຍນຳໃຊ້ເຄື່ອງຈັກ, ເຕັກໂນໂລຊີເປັນຕົ້ນຕໍ.

2. ໂຮງງານຜະລິດດິນຈີ່ ມາດຕະຖານທີ່ສອງ ໝາຍເຖິງ ໂຮງງານຜະລິດດິນຈີ່ ຂະໜາດນ້ອຍ ຕາມເລກລະຫັດ 2392, 2393 ດ້ວຍຂະບວນການປຸງແຕ່ງ ໂດຍນຳໃຊ້ແຮງງານຄົນເປັນຕົ້ນຕໍ ແລະ ນຳໃຊ້ເຄື່ອງຈັກທຸ່ນແຮງເຂົ້າຊ່ວຍຈຳນວນໜຶ່ງ.

## ໝວດທີ II

## ມາດຕະຖານໂຮງງານຜະລິດດິນຈີ່

ມາດຕາ 5. ເງື່ອນໄຂຂອງການດຳເນີນກິດຈະການໂຮງງານ

ໂຮງງານຜະລິດດິນຈີ່ ຕ້ອງຂຶ້ນທະບຽນວິສາຫະກິດ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ຂຶ້ນທະບຽນອາກອນພາຍໃນ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຕ້ອງຂໍອະນຸຍາດດຳເນີນກິດຈະການ ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 6. ມາດຕະຖານດ້ານສະຖານທີ່ຕັ້ງໂຮງງານ

ໂຮງງານຜະລິດດິນຈີ່ ຕ້ອງຕັ້ງຢູ່ສະຖານທີ່ກວ້າງຂວາງ, ບໍລິເວນໂຮງງານຕ້ອງມີເນື້ອທີ່ພຽງພໍ ແລະ ເໝາະສົມກັບກິດຈະການ, ເສັ້ນທາງເຂົ້າ-ອອກຕ້ອງກວ້າງຂວາງ ບໍ່ກີດຂວາງການສັນຈອນ, ບໍ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງງານຕ້ອງຕັ້ງຢູ່ຫ່າງໄກຈາກເຂດຊຸມຊົນແອອັດ, ຫ່າງໄກຈາກສະຖານທີ່ຫວງຫ້າມທາງການ ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດວາອາຮາມ... ຢ່າງນ້ອຍ 1.000 ແມັດ ແລະ ປະຕິບັດຖືກຕ້ອງຕາມລະບຽບການປຸກສ້າງທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ໂຮງງານຜະລິດດິນຈີ່ ມາດຕະຖານໜຶ່ງ ຕ້ອງປະກອບມີ: ຫ້ອງການບໍລິຫານ, ອາຄານຜະລິດດິນຈີ່, ລານຕາກດິນຈີ່, ສະຖານທີ່ເກັບມ້ຽນວັດຖຸດິບ ແລະ ຜະລິດຕະພັນສຳເລັດຮູບ ແລະ ຈັດໃຫ້ມີສິ່ງອຳນວຍຄວາມສະດວກໃຫ້ແກ່ກຳມະກອນ ເຊັ່ນ: ບ່ອນຈອດລົດ, ບ່ອນກິນເຂົ້າ, ບ່ອນພັກຜ່ອນ, ຫ້ອງນ້ຳຂອງກຳມະກອນ ແລະ ອື່ນໆທີ່ຈຳເປັນ ແລະ ຕ້ອງມີລະບົບໄຟຟ້າ ແລະ ນ້ຳໃຊ້ ຢ່າງພຽງພໍ.

ມາດຕາ 7. ມາດຕະຖານດ້ານອາຄານໂຮງງານ

1. ອາຄານໂຮງງານຜະລິດດິນຈີ່ມາດຕະຖານໜຶ່ງ ຕ້ອງມີໂຄງສ້າງແໜ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ, ເສົາເຫຼັກ ຫຼື ເສົາໄມ້ ທີ່ທົນທານຖາວອນ, ພື້ນເຮັດດ້ວຍເບຕົງ, ມຸງດ້ວຍກະເບື້ອງ ຫຼື ສັງກະສີ; ຄວາມສູງແຕ່ພື້ນຫາເພດານບໍ່ຕ່ຳກວ່າ 4 ແມັດ ໂດຍກໍ່ສ້າງຖືກຕ້ອງຕາມການອອກແບບ ແລະ ໄດ້ຮັບການຢັ້ງຢືນຈາກວິສາວະກອນວິຊາສະເພາະ ແລະ ບໍລິສັດອອກແບບກໍ່ສ້າງ ທີ່ໄດ້ຮັບອະນຸຍາດຈາກຂະແໜງການ ຍ.ທ.ຂ ແລະ ຖືກຕ້ອງຕາມລະບຽບການກ່ຽວກັບການຄຸ້ມຄອງໂຮງງານ.

2. ຕ້ອງຈັດໃຫ້ມີຂັ້ນຕອນ ແລະ ຂະບວນການປຸງແຕ່ງທີ່ບໍ່ສັບສົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

3. ຕ້ອງຈັດໃຫ້ມີລະບົບແສງສະຫວ່າງ, ລະບົບລະບາຍອາກາດ ໃຫ້ພຽງພໍ, ພາຍໃນອາຄານ ຕ້ອງບໍ່ແອອັດ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

ມາດຕາ 8. ມາດຕະຖານດ້ານເຄື່ອງຈັກ

ໂຮງງານຜະລິດດິນຈີ່ທຸກມາດຕະຖານ ຕ້ອງຕິດຕັ້ງເຄື່ອງຈັກ, ເຄື່ອງມືອຸປະກອນທີ່ຈຳເປັນຕົ້ນຕໍໃຫ້ເປັນລະບົບຕ່ອງໂສ້ການຜະລິດ, ໂດຍຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ມີຄວາມປອດໄພໃນເວລານຳໃຊ້ ຄືດັ່ງນີ້:

1. ໂຮງງານຜະລິດດິນຈີ່ ມາດຕະຖານໜຶ່ງ ຕ້ອງປະກອບມີ:

1- ເຄື່ອງຈັກຂຸດດິນ.

2- ເຄື່ອງຈັກບົດດິນ.

3- ເຄື່ອງຈັກຮ່ອນດິນ.

4- ເຄື່ອງຈັກລຳລຽງດິນ (Conveyor).

5- ເຄື່ອງຈັກປະສົມດິນ (mixer).

6- ເຄື່ອງຈັກລີ້ງດິນ (feeder).

7- ເຄື່ອງຈັກອັດດິນ (Hydraulicpress).

8- ເຄື່ອງຈັກຕັດດິນ (Semi-automated equipment for brick cutting).

9- ເຕົາເຜົາດິນ ແລະ ເຄື່ອງຈັກອື່ນໆ.

2. ໂຮງງານຜະລິດດິນຈີ່ ມາດຕະຖານສອງ ຕ້ອງປະກອບມີ:

1- ເຄື່ອງຈັກບົດດິນ.

2- ເຄື່ອງຈັກປະສົມ ແລະ ອັດດິນຈີ່ (Vacuum press with mixer).

3- ເຕົາເຜົາດິນ ແລະ ເຄື່ອງຈັກອື່ນໆ.

ມາດຕາ 9. ມາດຕະຖານດ້ານການຜະລິດ

ໂຮງງານຕ້ອງຈັດໃຫ້ມີຂະບວນການຜະລິດທີ່ສະອາດ ແລະ ເໝາະສົມ, ໂດຍຮັບປະກັນດ້ານຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນດິນຈີ່ ຕາມລະບຽບການທີ່ກ່ຽວຂ້ອງ. ແນໃສ່ເພື່ອສະໜອງໃຫ້ຕະຫຼາດພາຍໃນ ແລະ ຕ່າງປະເທດໄດ້.

ມາດຕາ 10. ມາດຕະຖານດ້ານວິຊາການເຕັກນິກ ແລະ ຄົນງານ

ໂຮງງານຕ້ອງມີວິຊາການ ແລະ ກຳມະກອນ ທີ່ມີຄວາມຮູ້ ຫຼື ມີປະສົບການກ່ຽວກັບການຜະລິດດິນຈີ່ປະຈຳຢູ່ໂຮງງານ ຢ່າງເໝາະສົມ.

**ມາດຕາ 11. ມາດຕະຖານດ້ານຄວາມປອດໄພ, ສຸຂະອະນາໄມ.**

1. ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟ ຫຼື ຕິດຕັ້ງອຸປະກອນຕັດໄຟຟ້າແບບອັດຕະໂນມັດ.

2. ຕ້ອງຕິດຕັ້ງລະບົບຄວາມປອດໄພ ຂອງໄຟຟ້າ ເຊັ່ນ: ໄຟຟ້າເຄື່ອງຈັກ, ໄຟຟ້າແສງສະຫວ່າງ....

3. ຕ້ອງມີລະບົບປ້ອງກັນອັນຕະລາຍຈາກເຄື່ອງຈັກ ເຊັ່ນ: ອຸປະກອນກັ້ນບັງ, ປ້າຍເຕືອນ, ປ້າຍຫ້າມໃສ່ຈຸດທີ່ເປັນອັນຕະລາຍ ແລະ ພ້ອມທັງມີແຜນການບຳລຸງຮັກສາເຄື່ອງຈັກ ແລະ ອຸປະກອນເປັນປະຈຳ.

4. ຕ້ອງຈັດໃຫ້ມີອຸປະກອນປ້ອງກັນໃຫ້ແກ່ກຳມະກອນ ເຊັ່ນ: ເຄື່ອງປິດປາກ, ດັງ, ເກີບ, ໝວກ, ສົບມື, ເຄື່ອງກັນຄວາມຮ້ອນ ໂດຍຂຶ້ນກັບຄວາມຈຳເປັນແຕ່ລະຂອດງານ) ແລະ ຊຸດເຄື່ອງນຸ່ງ ທີ່ສະອາດ (ຖ້າມີ) ເພື່ອຄວາມປອດໄພຂອງກຳມະກອນ, ເພື່ອຫຼີກລ້ຽງອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

5. ຕ້ອງຈັດໃຫ້ມີນ້ຳດື່ມສະອາດ, ຕູ້ຢາສຸກເສີນ, ຫ້ອງນ້ຳ ໃຫ້ພຽງພໍຕາມຄວາມເໝາະສົມ.

**ມາດຕາ 12. ມາດຕະຖານດ້ານສິ່ງແວດລ້ອມ**

ຕ້ອງມີບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມເບື້ອງຕົ້ນ ຫຼື ແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສຳລັບອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເລກທີ 1222/ອຫ, ລົງວັນທີ່ 7/12/05 ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ກ່ອນ ຈຶ່ງສາມາດກໍ່ສ້າງໂຮງງານ ແລະ ດຳເນີນກິດຈະການໂຮງງານໄດ້.

## ໝວດທີ III
## ການດຳເນີນກິດຈະການໂຮງງານຜະລິດດິນຈີ່

**ມາດຕາ 13. ການດັດສົມໂຮງງານ**

1. ການດຳເນີນກິດຈະການໂຮງງານຜະລິດດິນຈີ່ ຕ້ອງປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ຕ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

2. ໂຮງງານທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການມາກ່ອນ ແຕ່ມາດຕະຖານໂຮງງານຍັງບໍ່ທັນຄົບຖ້ວນ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ຕ້ອງໄດ້ປັບປຸງຄືນໃຫ້ຖືກຕ້ອງຕາມມາດຕະຖານທີ່ກຳນົດໄວ້ທຸກປະການ.

3. ໂຮງງານຜະລິດດິນຈີ່ທຸກປະເພດ ສາມາດເຕົ້າໂຮມກັນເປັນກຸ່ມໂຮງງານ ໂດຍສອດຄ່ອງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເລກທີ 125/ນຍ, ລົງວັນທີ່ 24/7/03.

**ມາດຕາ 14. ການສ້າງແຜນການຜະລິດຂອງໂຮງງານ**

ໂຮງງານຜະລິດດິນຈີ່ ຕ້ອງສ້າງແຜນການຜະລິດ ແລະ ແຜນການຈຳໜ່າຍປະຈຳປີຂອງໂຮງງານ ຕາມແຈ້ງການເລກທີ 663/ອຄ, ລົງວັນທີ່ 08/10/08 (ອ1-ອ7) ແລະ ຕາມລະບຽບການທີ່ກະຊວງອຸດສາຫະກຳ ແລະ ການຄ້າ ວາງອອກ ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກພະແນກອຸດສາຫະກຳ

ແລະ ການຄ້າ ແຂວງ, ນະຄອນຫລວງ ກ່ອນວັນທີ່ 15 ເດືອນມັງກອນ ຂອງທຸກໆປີ ແລະ ພ້ອມທັງສະຫລຸບລາຍງານ ຜົນການຈັດຕັ້ງປະຕິບັດແຜນການຂອງປີຜ່ານມາ ແລະ ແຜນການຂອງປີຕໍ່ໄປ.

**ມາດຕາ 15. ດ້ານວັດຖຸດິບ(ດິນໜຽວ)**

ໂຮງງານຜະລິດດິນຈີ່ທຸກປະເພດ ແລະ ທຸກຂະໜາດ ຕ້ອງໄດ້ຮັບໃບອະນຸຍາດຂຸດຄົ້ນດິນໜຽວ ໂດຍປະຕິບັດໃຫ້ຖືກຕ້ອງຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 16. ມາດຕະຖານຜະລິດຕະພັນ**

ຜະລິດຕະພັນດິນຈີ່ ຕ້ອງມີມາດຕະຖານຖືກຕ້ອງຕາມລະບຽບການຂອງອົງການວິທະຍາສາດ ເຕັກໂນໂລຊີແຫ່ງຊາດ ແລະ ລະບຽບການສະເພາະກ່ຽວຂ້ອງແຕ່ລະໄລຍະ.

## ໝວດທີ IV
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17. ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ດຳເນີນກິດຈະການໂຮງງານຜະລິດດິນຈີ່ ທີ່ເຄື່ອນໄຫວກິດຈະການມີຜົນງານດີເດັ່ນ, ປະຕິບັດຖືກຕ້ອງຕາມມາດຕະຖານ ເງື່ອນໄຂ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ, ບໍ່ສ້າງຜົນກະທົບຮ້າຍແຮງຕໍ່ສະພາບແວດລ້ອມ ແລະ ສັງຄົມ ຈະໄດ້ຮັບການພິຈາລະນາ ສິ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກຳ ປຸງແຕ່ງ ເລກທີ 67/ນຍ, ລົງວັນທີ່ 12/4/06 ແລະ ຈະໄດ້ຮັບການພິຈາລະນາຍ້ອງຍໍຕາມ ມາດຕາ 52 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ຕາມແຕ່ລະກໍລະນີ.

**ມາດຕາ 18. ມາດຕະການຕໍ່ຜູ້ລະເມີດ**

ຜູ້ດຳເນີນກິດຈະການໂຮງງານຜະລິດດິນຈີ່ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07 ຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ຄື:

1. ຄັ້ງທີ ໜຶ່ງ: ຖືກກ່າວເຕືອນ ແລະ ສຶກສາອົບຮົມ ຕາມມາດຕາ 24.
2. ຄັ້ງທີ ສອງ: ຖືກປັບໃໝ ແລະ ໃຊ້ແທນຄ່າເສັຍຫາຍ ຕາມມາດຕາ 25, 26.
3. ຄັ້ງທີ ສາມ: ຖືກປັບໃໝ ແລະ ປະຕິບັດມາດຕະການທາງອາຍາ ຕາມມາດຕາ 27 ແລະ ສັ່ງປິດກິດຈະການໂຮງງານໂດຍບໍ່ມີເງື່ອນໄຂຕໍ່ລອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳເປັນຜູ້ຊີ້ນຳ, ຕິດຕາມກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັບລະບຽບກົດໝາຍ ຂອງຂະແໜງການທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ມີໜ້າທີ່ເຜີຍແຜ່ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

**ມາດຕາ 20. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການ ແລະ ແຈ້ງການກ່ຽວກັບມາດຕະຖານໂຮງງານຜະລິດດິນຈີ່ ທີ່ປະກາດໃຊ້ໃນເມື່ອກ່ອນ ທີ່ກົງກັນຂ້າມກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ ປ່ຽນແທນ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ

ນຽວສະຫວາດ ສະແຫວງສັ...